**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ: 4585/ກງ

ນະຄອນຫລວງວຽງຈັນ,ລົງວັນທີ: 14 ພ:ຈິກ 2019

# ແຈ້ງການ

**ເຖິງ :** - ທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫລວງ

- ຫົວໜ້າພະແນກການເງິນແຂວງ, ນະຄອນຫລວງ.
- ກົມສ່ວຍສາອາກອນ, ສ່ວຍສາອາກອນປະຈຳ ແຂວງ, ນະຄອນຫຼວງ, ສ່ວຍສາອາກອນປະຈຳ ເມືອງ, ເທດສະບານ, ນະຄອນ.

**ເລື່ອງ :** ການຈັດຕັ້ງປະຕິບັດເກັບອາກອນປະເພດຕ່າງໆຈາກຜູ້ດຳເນີນທຸລະກິດ ກ່ຽວກັບ ກາເຟ ຫລື ຜົນຜະລິດກະສິກຳ.

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 70/ສພຊ,ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ,ລົງວັນທີ 20 ມິຖຸນາ 2018;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ບົດລາຍງານຂອງກົມສ່ວຍສາອາກອນ ສະບັບເລກທີ 1432/ກສອ,ລົງວັນທີ 22 ເມສາ 2019.

ເພື່ອເຮັດໃຫ້ການຈັດເກັບອາກອນປະເພດຕ່າງໆຈາກຜູ້ດຳເນີນທຸລະກິດ ກ່ຽວກັບກາເຟ ຫລື ຜົນຜະລິດກະສິກຳ ໄດ້ຖືກຈັດຕັ້ງຢ່າງຖືກຕ້ອງ, ຄົບຖ້ວນ, ທັນເວລາ ຕາມລະບຽບ ແລະກົດໝາຍໄດ້ກຳນົດໄວ້ໃນແຕ່ລະໄລຍະ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີກະຊວງການເງິນອອກແຈ້ງການ ດັ່ງນີ້:

1. ໃຫ້ລຶບລ້າງແຈ້ງການສະບັບເລກທີ 2391/ກງ ລົງວັນທີ 05 ຕຸລາ 2007 ແລ້ວໃຫ້ຈັດຕັ້ງປະຕິບັດການເກັບອາກອນປະເພດຕ່າງໆຈາກຜູ້ດຳເນີນທຸລະກິດ ກ່ຽວກັບກາເຟ ຫລື ຜົນຜະລິດກະສິກຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ ແລະກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ຢ່າງເຂັ້ມງວດ;
2. ໃຫ້ອຳນາດການປົກຄອງຂັ້ນແຂວງ ພິຈາລະນາລຶບລ້າງບັນດາ ແຈ້ງການ ຫລື ຄຳສັ່ງ ກ່ຽວກັບການເກັບລາຍຮັບສ່ວຍສາອາກອນ ທີ່ຂັດກັບກົດໝາຍກຳນົດ ທີ່ໄດ້ອອກຢູ່ຂັ້ນແຂວງ ແລະເມືອງ;
3. ໃຫ້ທຸກຫົວໜ່ວຍທຸລະກິດ ກ່ຽວກັບ ກາເຟ ຫລື ຜົນຜະລິດກະສິກຳ ນຳໃຊ້ໃບເກັບເງິນທີ່ມີຮູບແບບຖືກຕ້ອງ, ຄົບຖ້ວນ ຕາມລະບຽບການ, ຖືບັນຊີໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີໄດ້ກຳນົດໄວ້, ປະຕິບັດການແຈ້ງ ແລະມອບ ພັນທະອາກອນຕ່າງໆຜ່ານລະບົບອາກອນທັນສະໄໝ (ລະບົບ Tax Ris) ເພື່ອຫຼີກລ້ຽງການເກັບອາກອນແບບເປັນຖ້ຽວ ຫຼື ເກັບອາກອນກຳໄລແບບບັງຄັບ, ຖ້າຫາກບໍ່ປະຕິບັດການຖືບັນຊີຢ່າງຖືກຕ້ອງ, ຄົບຖ້ວນ, ບໍ່ແຈ້ງ ແລະມອບອາກອນຕາມກົດໝາຍກຳນົດ ແລະ ບໍ່ນຳໃຊ້ໃບເກັບເງິນທີ່ຖືກຕ້ອງ ນອກຈາກຈະຖືກຄິດໄລ່ໃຫ້ເສຍອາກອນກຳໄລແບບບັງຄັບ ແລະອາກອນປະເພດອື່ນຕາມກົດໝາຍກຳນົດແລ້ວ ຍັງຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
4. ໃຫ້ກົມສ່ວຍສາອາກອນ, ສ່ວຍສາອາກອນປະຈຳ ແຂວງ, ເມືອງ, ເທດສະບານ, ນະຄອນ ເຂັ້ມງວດໃນການຄຸ້ມຄອງ ແລະຕິດຕາມການມອບພັນທະອາກອນ ຂອງບັນດາຫົວໜ່ວຍທຸລະກິດ ໃຫ້ຖືກຕ້ອງ, ສອດຄ່ອງ ຕາມກົດໝາຍໄດ້ກຳນົດ.

ດັ່ງນັ້ນ,ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ລັດຖະມົນຕີ**

ສົມດີ ດວງດີ